PARTNER PUBLICATION



# ເພື່ອກ້າວໄປສູ່ເວທີຂອງຜູ້ທີ່ມີສ່ວນໄດ້ສ່ວນເສຍທີ່ຫລາກຫລາຍໃນພາກພື້ນອ່າງແມ່ນ້ຳຂອງ

ພັນທະມິດທີ່ຮ່ວມຮັບຜິດຊອບນ້ຳ (Shared Waters Partnership) ຂອງອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ແລະ ໂດຍການເປັນເຈົ້າພາບຂອງອົງການ SIWI, ໄດ້ດຳເນີນການສຳຫລວດ ແລະ ວິເຄາະແບບລວມໆ ກ່ຽວກັບບັນດາຜູ້ດຳເນີນການທີ່ບໍ່ແມ່ນລັດຖະບານ ເພື່ອກຳໜົດກາລະໂອກາດ ແລະ ຈຸດລິເລີ່ມຕ່າງໆ ເພື່ອປັບປຸງການດຳເນີນງານຮ່ວມກັນລະຫວ່າງ ພາກສ່ວນລັດຖະບານ ແລະ ບັນດາພາກສ່ວນທີ່ບໍ່ແມ່ນລັດຖະບານ ໃນພາກພື້ນອ່າງແມ່ນ້ຳຂອງ. ຜົນຂອງການສຳຫລວດໄດ້ຊີ້ໃຫ້ເຫັນເຖິງຄວາມສົນ ໃຈຢ່າງຫລວງຫລາຍ ໃນການສ້າງເວທີແຫ່ງຜູ້ທີ່ມີສ່ວນໄດ້ສ່ວນເສຍ-ທີ່ຫລາກຫລາຍ (MSP) ອັນໃຫມ່ຂຶ້ນ ຊຶ່ງມັນຈະເປັນການປະກອບສ່ວນໂດຍກົງໃຫ້ແກ່ບັນດາສະຖາບັນ ແລະ ເຄືອຂ່າຍຕ່າງໆທີ່ມີຢູ່ແລ້ວ ໃນການຍົກລະດັບຂະບວນການຮ່ວມມືກັນໂດຍກົງ ລະຫວ່າງບັນດາລັດ ຖະບານໃນພາກພື້ນ, ການມີສ່ວນຮ່ວມຂອງບັນດາຜູ້ມີສ່ວນໄດ້ສ່ວນເສຍ ແລະ ການຮ່ວມ ມືກັນໃນລະດັບພາກພື້ນ.

## ສິ່ງທ້າທາຍ

ການຄຸ້ມຄອງ ການພັດທະນາ ແລະ ການຈັດການ ແມ່ນ້ຳຂອງ ເຊິ່ງແມ່ນຫນຶ່ງໃນບັນດາແມ່ນ້ຳທີ່ໃຫຍ່ທີ່ສຸດ ແລະ ມີບໍລິເວນເຂດແດນອ່າງແມ່ນ້ຳ ທີ່ມີຜູ້ອາໄສຢູ່ຢ່າງຫລວງຫລາຍທີ່ສຸດໃນໂລກ, ແມ່ນສິ່ງທ້າທາຍທີ່ຊັບຊ້ອນອັນຫນຶ່ງ. ມັນຕ້ອງການ ຄວາມສົມດຸນຂອງບັນດາຜົນປະໂຫຍດ ແລະ ບູລິມະສິດທີ່ແຕກຕ່າງກັນ ຈາກບັນດາປະເທດ ແລະ ຜູ້ດຳເນີນການທີ່ຕ່າງກັນ. ຫົກປະເທດ ທີ່ມີແມ່ນ້ຳຮ່ວມກັນ (ເຊັ່ນ ກຳປູເຈຍ, ຈີນ, ລາວ, ພະມ້າ, ໄທ ແລະ ຫວຽດນາມ) ທັງຫມົດ ລ້ວນມີສິດອັນຊອບທຳຕາມກົດຫມາຍ, ແຕ່ກໍມີການແຂ່ງຂັນກັນທາງດ້ານຜົນປະໂຫຍດ ອັນເນື່ອງມາຈາກການພັດທະນາ.

ເພື່ອຈັດການກັບຄວາມມຸ້ງມາດປາຖະຫນາ ແລະ ຄວາມຕ້ອງການໃນຫລາຍລະດັບ ຂອງແຕ່ລະປະເທດ, ຫລາຍເວທີຂອງການຮ່ວມມືຂອງບັນດາລັດຖະ ບານໄດ້ຖືກສ້າງຂຶ້ນເພື່ອຊ່ວຍໃຫ້ບັນດາປະເທດ ເຮັດໃຫ້ແຜນພັດທະນາຂອງພວກເຂົາມີຄວາມຄືບຫນ້າຢ່າງສອດຄ່ອງ. ແຕ່ເຖິງຢ່າງໃດກໍ່ຕາມ, ໃນຂະນະທີ່ການເຈລະຈາຢ່າງເປັນປົກກະຕິລະຫວ່າງບັນດາປະເທດໄດ້ຖືກດຳເນີນໄປ ໃນຮູບແບບທາງການທູດລະດັບສູງ, ການມີສ່ວນຮ່ວມຂອງບັນດາ ຜູ້ດຳເນີນການທີ່ບໍ່ແມ່ນລັດຖະບານຢ່າງກວ້າງຂວາງນັ້ນແມ່ນຍັງບໍ່ທັນພຽງພໍ.

ທີ່ສຳຄັນທີ່ສຸດ ການຂາດການດຳເນີນການຮ່ວມກັນແບບບໍ່ເປັນທາງການ ແລະ ແບບບໍ່ໂປ່ງໃສ ກັບບັນດາຜູ້ດຳເນີນການທີ່ບໍ່ແມ່ນລັດຖະບານ ແມ່ນການຂາດໂອກາດຂອງເວທີການຮ່ວມມືຕ່າງໆຂອງບັນດາລັດຖະບານ ໃນການນຳໃຊ້ຄວາມສາມາດລະດັບສູງ ຂອງບັນດາຜູ້ດຳເນີນການ ແລະ ການຈັດຕັ້ງທີ່ເນັ້ນໃສ່ບັນຫາລະດັບພາກພື້ນ ເພື່ອການຄຸ້ມຄອງແລະພັດທະນາຊັບພະຍາກອນນ້ຳໃຫ້ໄດ້ຮັບຜົນດີທີ່ສຸດ. ສິ່ງທີ່ຮ້າຍແຮງທີ່ສຸດ,ການຂາດການດຳເນີນການຮ່ວມກັນຢ່າງຈິງໃຈ ສາມາດເຮັດໃຫ້ຄວາມເຄັ່ງຕຶງພາຍໃນພາກພື້ນອ່າງແມ່ນ້ຳ ໂດຍສະເພາະໃນລະດັບທ້ອງຖິ່ນ ເພີ່ມຂຶ້ນ, ເຮັດໃຫ້ບັນດາປະຊາຊົນທີ່ມີການຊີວິດການເປັນຢູ່ທີ່ບໍ່ຫມັ້ນຄົງຢູ່ແລ້ວ ເພີ່ມຄວາມບໍ່ແນ່ນອນໃນອະນາຄົດ ໃນການຮັບປະກັນທາງດ້ານສະບຽງອາຫານ, ນ້ຳ ແລະ ພະລັງງານ ຂອງພວກເຂົາ.

ການສ້າງເວທີແຫ່ງຜູ້ມີສ່ວນໄດ້ສ່ວນເສຍ-ທີ່ຫລາກຫລາຍ (MSP) ສຳລັບອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ອາດຈະມີປະໂຫຍດ ຕໍ່ບັນດາລັດຖະບານ ແລະ ບັນດາເວທີຕ່າງໆຂອງລັດຖະບານໃນພາກພື້ນແມ່ນ້ຳຂອງ, ເປັນເສັ້ນທາງອັນຫນຶ່ງໃຫ້ແກ່ບັນດາລັດຖະບານ:

- ເພື່ອການດຳເນີນງານຮ່ວມກັນທີ່ຍາວນານ ແລະ ເປັນປົກກະຕິ, ການເປີດກວ້າງໃຫ້ແກ່ບັນດາຜູ້ມີສ່ວນໄດ້ສ່ວນເສຍ ແບບມີລະບົບ ແລະ ສະຖາບັນ.
- ເພື່ອແລກປ່ຽນແຜນດຳເນີນງານ ກັບບັນດາຜູ້ມີສ່ວນໄດ້ສ່ວນເສຍ ແລະ ບັນດານັກຄົ້ນຄ້ວາຕ່າງໆ ແລະ ເພື່ອຮັບຟັງຄວາມຄິດເຫັນຂອງບັນດາຜູ້ມີສ່ວນໄດ້ສ່ວນເສຍ ຕໍ່ກັບບັນດາໂຄງການທີ່ມີລັກສະນະສະເພາະ ແລະ ເພື່ອແລກປ່ຽນຄວາມຄິດຄວາມເຫັນດັ່ງກ່າວຕໍ່ບັນດາຜູ້ພັດທະນາ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງ - ເຊິ່ງເປັນສິ່ງທີ່ບໍ່ໄດ້ປະຕິບັດຢ່າງເປັນປົກກະຕິໃນໄລຍະຜ່ານມາ.

## ວິທີການດຳເນີນການສຳຫລວດ

ມີຈຳນວນ 39 ອົງການໃນລະດັບພາກພື້ນ ໄດ້ຕອບແບບຟອມສຳຫລວດທີ່ນຳໃຊ້ລະບົບອີເລັກໂທຣນິກ*, 28 ອົງການ ໄດ້ເຂົ້າຮ່ວມໃນການສຳພາດເພີ່ມເຕີມ, ກ່ຽວກັບ:

- ພາລະບົດບາດ, ຂອບເຂດຄວາມຮັບຜິດຊອບ ແລະ ຄວາມສາມາດໃນການຄຸ້ມຄອງ ແລະ ການຮ່ວມມືໃນເລື່ອງຕ່າງໆ ທີ່ກ່ຽວກັບນ້ຳຂອງ ໃນພາກພື້ນອ່າງແມ່ນ້ຳຂອງ;
- ລັກຊະນະຂອງສາຍພົວພັນ ແລະ ການສື່ສານ ກັບບັນດາກຸ່ມຜູ້ມີສ່ວນໄດ້ສ່ວນເສຍອື່ນໆ ພາຍໃນພາກພື້ນອ່າງແມ່ນ້ຳ ຂອງແຕ່ລະອົງການ;
- ແລະ ທັດສະນະວິໄສຂອງພວກເຂົາ ໃນການສ້າງ, ອອກແບບ ແລະ ເປົ້າຫມາຍ ຂອງເວທີແຫ່ງຜູ້ມີສ່ວນໄດ້ສ່ວນເສຍ-ທີ່ຫລາກຫລາຍ ພາຍໃນຂົງເຂດອ່າງແມ່ນ້ຳຂອງ.

---

* ຟອມສຳຫລວດ ໄດ້ຖືກສົ່ງໄປໃຫ້ ບັນດາຜູ້ດຳເນີນງານທີ່ບໍ່ຂຶ້ນກັບລັດຖະບານ ຈຳນວນ 100 ພາກສ່ວນ ທີ່ດຳເນີນງານໃນລະດັບພາກພື້ນ; ບັນທັດຖານແມ່ນ ບັນດາອົງການ ທີ່ຂຶ້ນກັບ ຫລື ດຳເນີນງານ ໃນເຄືອຄ່າຍ ຫລື ອົງການທີ່ຈັດຕັ້ງປະຕິບັດຢູ່ໃນສອງ ຫລື ຫລາຍກວ່າສອງປະເທດ ໃນພາກພື້ນອ່າງແມ່ນ້ຳຂອງ, ລວມທັງ: NGOs/networks/CSOs, ໃນລະດັບປະເທດ, ພາກພື້ນ ແລະ ສາກົນ, ບັນດາສະມາຄົມ ຫລື ສະພາທຸລະກິດໃນລະດັບພາກພື້ນ, ແລະ ສະຖາບັນການສຶກສາໃນພາກພື້ນ, ມະຫາວິທະຍາໄລ ຫລື ອົງການຄົ້ນຄວ້າ, ເຄືອຄ່າຍ, ຄະນະວິໄຈ ຫລື ໂຄງການຕ່າງ.




ຮູບສະແດງ 1: ຜູ້ໃຫ້ຂໍ້ມູນການສໍາຫລວດແບ່ງຕາມປະເທດພາຄີ




ຮູບສະແດງ 2: ຜູ້ໃຫ້ຂໍ້ມູນສໍາຫລວດແບ່ງຕາມການລະບຸສະຖານະພາບທາງດ້ານກົດໝາຍ

ສິ່ງທີ່ໄດ້ຄົ້ນພົບໃນການສໍາຫລວດຄັ້ງນີ້ ໄດ້ຖືກເຜີຍແຜ່ຕໍ່ບັນດາຜູ້ໃຫ້ຂໍ້ມູນຕ່າງໆ ໃນກອງປະຊຸມ ຊຶ່ງຖືກຈັດຂຶ້ນຢູ່ນະຄອນບາງກອກ ໃນເດືອນພະຈິກ 2016 ຊຶ່ງເປັນໂອກາດໃຫ້ບັນດາຜູ້ເຂົ້າຮ່ວມໄດ້ປຶກສາຫາລືກັນ ກ່ຽວກັບຮູບແບບ ແລະ ບົດບາດທີ່ມີຄວາມເປັນໄປໄດ້ ຂອງເວທີແຫ່ງຜູ້ມີສ່ວນໄດ້ສ່ວນເສຍ-ທີ່ຫລາກຫລາຍ (MSP) ບັນດາຄວາມຄິດເຫັນ ແລະ ຄໍາຖາມຕ່າງໆ ທີ່ໄດ້ຍົກຂຶ້ນໃນການປຶກສາຫາລືຄັ້ງນີ້ ໄດ້ຖືກນໍາໄປປຶກສາຫາລືຢ່າງລະອຽດ ໃນກອງປະຊຸມສະເພາະ ກັບບັນດາຜູ້ຕາງຫນ້າ ຂອງຄະນະກໍາມາທິການແມ່ນໍ້າຂອງສາກົນ ແລະ ອົງການຮ່ວມມື ລະຫວ່າງແມ່ນໍ້າລ້ານຊ້າງ-ແມ່ນໍ້າຂອງ.

## ສິ່ງທີ່ໄດ້ຄົ້ນພົບຈາກການສໍາຫລວດ

ມີຄວາມຈໍາເປັນທີ່ຕ້ອງຂະຫຍາຍການເຂົ້າຮ່ວມດໍາເນີນງານຂອງບັນດາຜູ້ມີສ່ວນໄດ້ສ່ວນເສຍຕ່າງໆ ໃນພາກພື້ນແມ່ນໍ້າຂອງ | ເຖິງແມ່ນວ່າຈະໄດ້ມີໂຄງການຕ່າງໆ ກ່ຽວກັບການຄຸ້ມຄອງນໍ້າໃນລະດັບພາກພື້ນແລ້ວກໍ່ຕາມ, ຍັງມີການວິພາກວິຈານກ່ຽວກັບ ການຂາດການມີສ່ວນຮ່ວມຂອງບັນດາຜູ້ດໍາເນີນການທີ່ບໍ່ແມ່ນລັດຖະບານ ແລະ ຫລາຍຄັ້ງ ຍັງບໍ່ມີຄວາມໂປ່ງໃສພຽງພໍ ຫລື ມີພຽງຄວາມໂປ່ງໃສບາງສ່ວນ ໃນວິທີການສື່ສານ ແລະ ການເຮັດວຽກຮ່ວມກັນຂອງພາກສ່ວນລັດຖະບານ.

ໃຫ້ເຫັນຄວາມສໍາຄັນ ຂອງການປະກອບສ່ວນຂອງສະມາຊິກຊຸມຊົນ ຈໍານວນຫລາຍສິບລ້ານຄົນ ທີ່ໄດ້ຮັບຜົນກະທົບຈາກການພັດທະນາ ໂຄງຮ່າງພື້ນຖານກ່ຽວກັບນໍ້າ ແລະ ການຈໍາກັດຄວາມເຂົ້າໃຈຕໍ່ແຜນການພັດທະນາຂອງພວກເຂົາ.

ພ້ອມກັນນັ້ນ, ຍັງມີຫລາຍໆອົງການຢູ່ໃນພາກພື້ນ ທີ່ມີປະສົບການອັນມີຄ່າ ແລະ ມີຄວາມຊ່ຽວຊານ ໃນຂົງເຂດວຽກງານການຄຸ້ມຄອງຊັບພະຍາກອນທໍາມະຊາດ, ແຕ່ວ່າພວກເຂົາມີໂອກາດພຽງເລັກນ້ອຍທີ່ຈະໄດ້ປະກອບສ່ວນເປັນທາງການ ໂດຍສະເພາະແມ່ນຢູ່ໃນລະດັບພາກພື້ນ ແລະຍັງຂາດຄວາມສະເໝີຕົ້ນສະປາຍຕື່ມອີກ.

ສະຖາບັນກ່ຽວກັບການຄຸ້ມຄອງນໍ້າໃນລະດັບພາກພື້ນ:

1. ຄະນະກໍາມາທິການແມ່ນໍ້າຂອງສາກົນ
2. ອານຸພາກພື້ນແມ່ນໍ້າຂອງ
3. ກົນໄກການຮ່ວມມື ແມ່ນໍ້າລ້ານຊ້າງ-ແມ່ນໍ້າຂອງ

ບັນດາອົງການໃນລໍາດັບພາກພື້ນ ໃຫ້ການສະຫນັບສະຫນູນຢ່າງສູງ ຕໍ່ແນວຄວາມຄິດກ່ຽວກັບ ເວທີແຫ່ງຜູ້ມີສ່ວນໄດ້ສ່ວນເສຍ-ທີ່ຫລາກຫລາຍ | ການເຮັດແຜນທີ່ ກ່ຽວກັບບັນດາຜູ້ມີສ່ວນໄດ້ສ່ວນເສຍ ໄດ້ສະແດງໃຫ້ເຫັນວ່າ ໄດ້ຮັບການສະຫນັບສະຫນູນ ແລະ ມີຄວາມຄິດເຫັນໃນແງ່ບວກຫລາຍ ຕໍ່ກັບເວທີແຫ່ງຜູ້ມີສ່ວນໄດ້ສ່ວນເສຍ. ຈໍານວນ 34 (ຈາກ 39) ອົງການ ໄດ້ເວົ້າວ່າ ພວກເຂົາໄດ້ມອງເຫັນຄຸນຄ່າໃນການສ້າງເວທີແຫ່ງຜູ້ມີສ່ວນໄດ້ສ່ວນເສຍ-ທີ່ຫລາກຫລາຍ ໃນລະດັບພາກພື້ນ, ລວມທັງທົ່ວປະເທດ, ພ້ອມທັງເຊື່ອມຕໍ່ໂດຍກົງກັບຂະບວນການດໍາເນີນງານຂອງບັນດາລັດຖະບານໃນລະດັບພາກພື້ນ. ຜູ້ໃຫ້ຂໍ້ມູນອີກຫ້າຄົນທີ່ຍັງເຫລືອ ກໍ່ໄດ້ສະແດງການສະຫນັບສະຫນູນ, ແຕ່ວ່າພວກເຂົາ ມີຄວາມປະສົງຢາກໃຫ້ສືບຕໍ່ສ້າງຈາກບັນດາເວທີທີ່ມີຢູ່ແລ້ວ.

ຄວາມສໍາພັນອັນໃດ ທີ່ເວທີແຫ່ງຜູ້ມີສ່ວນໄດ້ສ່ວນເສຍ-ທີ່ຫລາກຫລາຍ ອາດມີຕໍ່ຄະນະກໍາມາທິການແມ່ນໍ້າຂອງສາກົນ | ບັນດາຜູ້ໃຫ້ຂໍ້ມູນເຫັນວ່າ ຄະນະກໍາມາທິການແມ່ນໍ້າຂອງສາກົນໃນຖານະທີ່ເປັນເປົ້າຫມາຍທີ່ສໍາຄັນໃນການດໍາເນີນງານຮ່ວມກັນ, ແລະ ເວທີແຫ່ງຜູ້ມີສ່ວນໄດ້ສ່ວນເສຍທີ່ໄດ້ຖືກສະເຫນີໃຫ້ສ້າງຂຶ້ນ ແມ່ນເປັນການສ້າງຈຸດລິເລີ່ມທີ່ຊັດເຈນ ຕໍ່ຄະນະກໍາມາທິການແມ່ນໍ້າຂອງສາກົນ ສໍາລັບການດໍາເນີນງານຮ່ວມກັນກັບບັນດາຜູ້ມີສ່ວນໄດ້ສ່ວນເສຍຕ່າງໆໃນພາກພື້ນ. ເຖິງຢ່າງໃດກໍ່ຕາມ, ສິ່ງທີ່ຫນ້າເປັນຫ່ວງອັນສໍາຄັນແມ່ນລວມມີບັນດາຂໍ້ຈໍາກັດຂອງ ຄະນະກໍາມາທິການແມ່ນໍ້າຂອງສາກົນ ໃນການໂນ້ມນ້າວລັດຖະບານຂອງບັນດາປະເທດພາຄີຕ່າງໆ, ການແລກປ່ຽນຂໍ້ມູນຂ່າວສານຕ່າງໆ, ແລະ ການເນັ້ນໃສ່ພຽງແຕ່ບັນດາປະເທດໃນຂົງເຂດແມ່ນໍ້ຂອງຕອນລຸ່ມຂອງຄະນະກໍາມາທິການແມ່ນໍ້າຂອງສາກົນ, ຊຶ່ງການດໍາເນີນງານຮ່ວມກັນກັບຈີນ ແລະ ມຽນມາ ຍັງມີຫນ້ອຍຢູ່.

ບັນດາຜູ້ໃຫ້ຂໍ້ມູນໄດ້ເນັ້ນວ່າ ເວທີດັ່ງກ່າວບໍ່ຄວນຖືກເຊື່ອມຕໍ່ພຽງແຕ່ກັບຄະນະກໍາມາທິການແມ່ນໍ້າຂອງສາກົນເປັນຫລັກເທົ່ານັ້ນ, ແຕ່ມັນຄວນຮັກສາຄວາມເປັນເອກະລາດ. ເວທີດັ່ງກ່າວຄວນໄດ້ດໍາເນີນງານໃນລະດັບພາກພື້ນ ບໍ່ແມ່ນພຽງແຕ່ເຮັດວຽກຮ່ວມກັບຄະນະກໍາມາທິການແມ່ນໍ້າຂອງສາກົນເທົ່ານັ້ນ, ແຕ່ມັນຕ້ອງເຊື່ອມຕໍ່ກັບ ອົງການຮ່ວມມືແມ່ນໍ້າລ້ານຊ້າງ-ແມ່ນໍ້າຂອງ, ອົງການອານຸພາກພື້ນແມ່ນໍ້າຂອງ ແລະ ອາຊຽນ ທີ່ເຫັນວ່າມີຄວາມເໝາະສົມ.

ບັນຫາບຸລິມະສິດຕ່າງໆ ສໍາຫລັບອົງການລະດັບພາກພື້ນ | ບັນດາຜູ້ໃຫ້ຂໍ້ມູນໄດ້ຖືກຂໍໃຫ້ເລືອກບັນຫາບຸລິມະສິດທີ່ສຸດ ກ່ຽວກັບພາກພື້ນອ່າງແມ່ນໍ້າຂອງ ຂອງອົງການຂອງພວກເຂົາຈາກລາຍຊື່ຂອງບັນດາຕົວເລືອກທີ່ມີຄວາມອາດເປັນໄປໄດ້.
ລາຍຊື່ຂອງບັນດາຕົວເລືອກດັ່ງກ່າວແມ່ນຖືກກໍາຫນົດຂຶ້ນໂດຍອີງໃສ່ຄວາມຕ້ອງການຂອງພາກພື້ນອ່າງແມ່ນໍ້າ ແລະ ສິ່ງທ້າທາຍທີ່ໄດ້ຖືກອະທິບາຍ ຢູ່ໃນແຜນຍຸດທະສາດ 2016-2020 ຂອງຄະນະກໍາມາທິການແມ່ນໍ້າຂອງສາກົນ, ໃນສົນທິສັນຍາແມ່ນໍ້າຂອງ 1995 ແລະ ຄວາມຄິດເຫັນຂອງບັນດາຊ່ຽວຊານຕ່າງໆ. ບັນດາຜູ້ໃຫ້ຂໍ້ມູນ ຍັງມີທາງເລືອກເພື່ອໃຫ້ຂຽນກ່ຽວກັບບັນຫາອັນອື່ນ. ຈໍານວນ 37 ຂອງຈໍານວນທັງຫມົດ 39 ຄົນຂອງຜູ້ໃຫ້ຂໍ້ມູນໄດ້ຕອບຄໍາຖາມດັ່ງກ່າວນີ້. ໃນຂະນະທີ່ບັນດາຜູ້ໃຫ້ຂໍ້ມູນຖືກຂໍໃຫ້ກໍາຫນົດບູລິມະສິດທີ່ສໍາຄັນທີ່ສຸດພຽງແຕ່ສາມອັນ, ແຕ່ສ່ວນຫລາຍແມ່ນພວກເຂົາຕອບຫລາຍກວ່າສາມບູລິມະສິດ.

ຫ້າບັນຫາທີ່ເປັນບູລິມະສິດທີ່ສຸດສໍາຫລັບອົງການແຫ່ງຊາດຕ່າງໆ:

1. ການພັດທະນາໄຟຟ້າພະລັງນໍ້າ
2. ການຄຸ້ມຄອງນໍ້າຂ້າມຊາຍແດນ
3. ການປ່ຽນແປງສະພາບດິນຟ້າອາກາດ
4. ການເສື່ອມໂຊມຂອງສະພາບແວດລ້ອມ
5. ພະລັງງານ




ຮູບສະແດງທີ່ 3: ບັນຫາບູລິມະສິດຂອງອ່າງແມ່ນ້ຳຂອງ ທີ່ຖືກຄັດເລືອກໂດຍ ບັນດາຜູ້ໃຫ້ຂໍ້ມູນ 39 ອົງການທີ່ເຂົ້າຮ່ວມໃນການສຳຫລວດ.

## ຂໍ້ແນະນຳ

ຜົນຂອງການສຳຫລວດ ແລະ ການປຶກສາຫາລື ກັບບັນດາຜູ້ມີສ່ວນໄດ້ສ່ວນເສຍ ໃນກອງປະຊຸມທີ່ຈັດຂຶ້ນຢູ່ເມືອງ ບາງກອກ ໃນເດືອນພະຈິກ 2016 ໄດ້ສະແດງໃຫ້ເຫັນວ່າເວທີແຫ່ງຜູ້ມີສ່ວນໄດ້ສ່ວນເສຍ ໃນພາກພື້ນອ່າງແມ່ນ້ຳຂອງ ອາດຈະອີງໃສ່ບັນດາບູລິມະສິດ ແລະ ອົງປະກອບຕ່າງໆດັ່ງລຸ່ມນີ້:

ບູລິມະສິດ
- ປັບປຸງ ການເຈລະຈາ, ການສ້າງເຄືອຂ່າຍ ແລະ ການຮ່ວມມື
- ປະສານງານ ກ່ຽວກັບກິດຈະກຳ ແລະ ການແຊກແຊງ (ການເຂົ້າມາດຳເນີນງານ)
- ການເສີມສ້າງຂີດຄວາມສາມາດ
- ໃຫ້ມິຕິ (ທິດທາງ) ໃນລະດັບພາກພື້ນ ສຳຫລັບການປຶກສາຫາລືໃນລະດັບປະເທດ
- ສະແດງທັດສະນະຂອງທຸກໆປະເທດ ໂດຍມີວິໄສທັດອັນດຽວກັນ
- ສົ່ງເສີມການມີຜົນປະໂຫຍດຮ່ວມກັນໃນທົ່ວຂົງເຂດອ່າງແມ່ນ້ຳ
- ກະຕຸ້ນບັນດາຍຸດທະສາດຂອງຜູ້ໃຫ້ທຶນ
- ສົ່ງເສີມແລະຈັດຂະບວນການຮຽນຮູ້ ແລະ ແລກປ່ຽນຂໍ້ມູນຂ່າວສານ
- ກະຕຸ້ນເວທີທາງການ (ຄະນະກຳມາທິການແມ່ນ້ຳຂອງສາກົນ ແລະ ຄະນະກຳມະການແມ່ນ້ຳຂອງແຫ່ງຊາດ)
- ເຜີຍແຜ່ບົດຮຽນ ແລະ ຄວາມຮູ້ ເພື່ອເຊື່ອມຕໍ່ລະຫວ່າງ ການເມືອງ ແລະ ວິທະຍາສາດ
- ສ້າງຕັ້ງເວທີທີ່ເປັນກາງ
- ສ້າງຄວາມກົມກຽວ ໃນການອານຸລັກ ແລະ ແນວທາງຂອງການພັດທະນາ

ການອອກແບບ
- ມີກອງເລຂານ້ອຍໆອັນໜຶ່ງ, ໂດຍການເປັນເຈົ້າພາບຂອງໜ່ວຍງານຫາລືອົງການທີ່ຖືກຕ້ອງຕາມກົດໝາຍໃດໜຶ່ງ
- ມີບົດບາດໃນການຕິດຕໍ່ພົວພັນກັບໜ່ວຍງານຕ່າງໆຢ່າງກວ້າງຂວາງ
- ເປັນເອກະລາດ, ເປັນກາງ, ຍຸດຕິທຳ
- ມີຄວາມຊ່ຽວຊານສູງດ້ານລະບຽບກົດໝາຍ ແລະ ມີສາຍສຳພັນທີ່ດີກັບບັນດາຜູ້ມີສ່ວນໄດ້ສ່ວນເສຍຕ່າງໆ, ລວມທັງຝ່າຍທີ່ບໍ່ແມ່ນລັດຖະບານ ແລະ ຝ່າຍທາງການຂອງລັດຖະບານ

ບັນດາອົງການທີ່ມີຄວາມອາດສາມາດເປັນເຈົ້າພາບ:
- ມະຫາວິທະຍາໄລ ຫລື ສະຫະພັນຂອງບັນດາສະຖາບັນແລະມະຫາວິທະຍາໄລຕ່າງໆ
- ອົງການ SIWI, IUCN, WWF, CGIAR/WLE, SUMERNET/SEI, Save the Mekong, VRN, Save the Salween

## ບາດກ້າວຕໍ່ໄປ

ບົດລາຍງານນີ້ ຈະຖືກແປເປັນພາສາຂອງບັນດາປະເທດແມ່ນ້ຳຂອງຕ່າງໆ ແລະ ເຜີຍແຜ່ເພື່ອການສືບຕໍ່ປຶກສາຫາລື ກັບບັນດາຜູ້ມີສ່ວນໄດ້ສ່ວນເສຍຕ່າງໆ. ໜ່ວຍງານປະສານງານຊົ່ວຄາວໄດ້ຮັບການສ້າງຕັ້ງຂຶ້ນ (ໂດຍມີຜູ້ຕາງໜ້າຂອງອົງການ SEI, SIWI, IUCN and Oxfam), ກຸ່ມດັ່ງກ່າວຈະມີໜ້າທີ່ຮັບຜິດຊອບດັ່ງລຸ່ມນີ້:

1. ສ້າງບົດສະເໜີໂຄງການໂດຍຫຍໍ້ ກ່ຽວກັບການສ້າງເວທີແຫ່ງຜູ້ມີສ່ວນໄດ້ສ່ວນເສຍສຳລັບພາກພື້ນແມ່ນ້ຳຂອງ
2. ຊອກຫາວິທີການດຳເນີນງານຮ່ວມກັນ ແລະ ມີການຕົກລົງເຫັນດີຈາກບັນດາປະເທດໃນພາກພື້ນແມ່ນ້ຳຂອງ
3. ຊອກຫາທາງເພື່ອໃຫ້ຜູ້ໃຫ້ທຶນເຂົ້າຮ່ວມ
4. ກຳໜົດອົງການ ທີ່ຈະສືບຕໍ່ສ້າງເວທີແຫ່ງຜູ້ມີສ່ວນໄດ້ສ່ວນເສຍ

## ກ່ຽວກັບບົດລາຍງານນີ້

ພັນທະມິດທີ່ຮ່ວມຮັບຜິດຊອບນໍ້າ (Shared Waters Partnership), ໂດຍການເປັນເຈົ້າພາບຂອງອົງການ SIWI ໄດ້ດຳເນີນການສຳຫລວດ ແລະ ວິເຄາະໂດຍລວມ ກ່ຽວກັບບັນດາຜູ້ດຳເນີນການທີ່ບໍ່ແມ່ນລັດຖະບານ ເພື່ອກຳຫນົດບັນດາໂອກາດ ແລະ ຈຸດລິເລີ່ມຕ່າງໆ ເພື່ອປັບປຸງການດຳເນີນງານຮ່ວມກັນລະຫວ່າງ ເຈົ້າຫນ້າທີ່ທາງການ ແລະ ບັນດາຜູ້ມີສ່ວນໄດ້ສ່ວນເສຍທີ່ບໍ່ແມ່ນເຈົ້າຫນ້າທີ່ທາງການ ໃນພາກພື້ນແມ່ນໍ້າຂອງ. ຜົນຂອງການສຳຫລວດສະແດງໃຫ້ເຫັນວ່າ ມັນມີຜົນປະໂຫຍດອັນໃຫຍ່ຫລວງ ໃນການທີ່ຈະສ້າງເວທີແຫ່ງຜູ້ມີສ່ວນໄດ້ສ່ວນເສຍ-ທີ່ຫລາກຫລາຍ (MSP) ຊຶ່ງມັນຈະເປັນອົງປະກອບສຳຄັນໃຫ້ແກ່ບັນດາສະຖາບັນ ແລະ ເຄືອຂ່າຍຕ່າງໆທີ່ເຄີຍມີ ເພື່ອປະກອບສ່ວນໂດຍກົງໃສ່ໃນການປັບປຸງ ຂະບວນການດຳເນີນງານຂອງບັນດາລັດຖະບານໃນພາກພື້ນ, ການດຳເນີນງານຮ່ວມກັນຂອງບັນດາຜູ້ມີສ່ວນໄດ້ສ່ວນເສຍ ແລະ ການຮ່ວມມືໃນລະດັບພາກພື້ນ.

ເອກະສານນີ້ ໄດ້ຖືກພິມເຜີຍແຜ່ໂດຍຄວາມພະຍາຍາມຮ່ວມກັນຂອງອົງການ SIWI ແລະອົງການ Oxfam ໃນວັນທີ່ 22 ມິຖຸນາ 2017.

ສຳຫລັບຜູ້ທີ່ຕ້ອງການຂໍ້ມູນເພີ້ມເຕີມ, ກະລຸນາຕິດຕໍ່:

SIWI - kerry.schneider@siwi.org
Oxfam - paulinetm@oxfam.org.au

## ບັນດາຜູ້ຂຽນ

ຜູ້ທີ່ປະກອບສ່ວນໃຫ້ແກ່ໂຄງການສຳຫລວດນີ້ ລວມມີ ຊ່ຽວຊານຈາກອົງການ SIWI ເຊັ່ນ Klomjit Chandrapanya, Dr Marian Neal (Patrick), Kerry Schneider, Maria Vink and Elizabeth Yaari ນອກຈາກນີ້ ຍັງມີການປະກອບສ່ວນຈາກຄູ່ຮ່ວມງານຈາກ ອົງການ CGIAR ເຊັ່ນ Stew Motta, CGIAR's Program on Water, Land, & Ecosystems (WLE) Greater Mekong ແລະ Dr Nora Van Cauwenberg ຈາກອົງການ UNESCO-IHE.

ການສຶກສານີ້ ແມ່ນໄດ້ຮັບການສະຫນັບສະຫນູນທາງດ້ານການເງິນ ສ່ວນຫນຶ່ງຈາກອົງການ Oxfam, ໃນຖານະທີ່ເປັນສ່ວນຫນຶ່ງຂອງໂຄງການລວມ ແລະ ແຜນງານຄຸ້ມຄອງນໍ້າໃນພາກພື້ນແມ່ນໍ້າຂອງ, ຊຶ່ງເປັນການສ້າງການມີສ່ວນຮ່ວມຂອງສັງຄົມ ໃນການຄຸ້ມຄອງນໍ້າ ຂອງອົງການ Oxfam ໂດຍຜ່ານການເສີມສ້າງຄວາມອາດສາມາດ ແລະ ການເຈລະຈາທາງດ້ານນະໂຍບາຍ.

OXFAM

Stockholm International Water Institute
Box 101 87 | SE-100 55, Stockholm, Sweden
Visiting Address: Linnégatan 87A
www.siwi.org

UNDP
Empowered lives.
Resilient nations.

WATER GOVERNANCE FACILITY

SIWI